# ບົດສະເໜີໃຫ້ທຶນການຄົ້ນຄວ້າ

ການປູກຈິດສໍານຶກການຄົ້ນຄວ້າດ້ານມະນຸດວິທະຍາ ແລະ ວິທະຍາສາດສັງຄົມ ເກີດຂຶ້ນໄດ້ດ້ວຍການສະໜັບສະໜູນທຶນອັນໃຫຍ່ຫຼວງຂອງສວິເດນ. ໂຄງການໃຫ້ທຶນນີ້ແມ່ນເປັນສ່ວນໜຶ່ງຂອງໂຄງການຮ່ວມມືຂ້າມຊາດໃໝ່ ທີ່ແນໃສ່ຍົກສູງຂີດຄວາມສາມາດການຄົ້ນຄວ້າຂອງນັກວິຊາການ ແລະ ສະຖາບັນໃນທ້ອງຖິ່ນ, ໂດຍສະເພາະໃນດ້ານຫຼັງການປະທະກັນ ແລະ ຍັງມີຂໍ້ຂັດແຍ້ງໃນພູມີພາກ ແລະ ຂົງເຂດປະເທດທີ່ມີຊາຍແດນຕິດຈອດກັນ, ພ້ອມກັບນັ້ນກໍ່ຊ່ວຍຫຼຸດຜ່ອນຄວາມບອບບາງທາງດ້ານເສດຖະກິດ ແລະ ສັງຄົມ ຂອງບັນດາປະເທດອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້ ໂດຍຜ່ານນະໂຍບາຍ - ວຽກການຄົ້ນຄວ້າທີ່ກ່ຽວຂ້ອງ.

ໂຄງການໄດ້ສຸມໃສ່ບັນດາຄະນະວິຊາທີ່ເປັນນັກຄົ້ນຄວ້າໜຸ່ມ, ປະລິນຍາໂທ, ນັກຄົ້ນຄວ້າຜູ້ອາວຸໂສທີ່ເປັນອິດສະລະ, ແມ່ຍິງ ແລະ ຊົນເຜົ່າສ່ວນໜ້ອຍ ໂດຍສະເພາະທຶນການຄົ້ນຄວ້າເພື່ອການພັດທະນາມະນຸດວິທະຍາ ແລະ ວິທະຍາສາດສັງຄົມ (CHSS) ທຶນດັ່ງກ່າວນີ້ແມ່ນມີໃຫ້ສໍາລັບການຄົ້ນຄວ້າໄລຍະສັ້ນ (ບໍ່ກາຍ 2 ເດືອນ), ຂະ ໜາດກາງ (2-6 ເດືອນ) ແລະ ໄລຍະຍາວ (12 ເດືອນ) ເພື່ອພັດທະນາໃນຂົງເຂດມະນຸດວິທະຍາ ແລະ ວິທະຍາສາດສັງຄົມໃນອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້.

ສະມາຄົມເພື່ອການສຶກສາອາຊີ ຂໍເຊີນຜູ້ສະໝັກຈາກບັນດາປະເທດທີ່ມີລາຍຮັບປານກາງ ແລະ ຕໍ່າໃນອາຊີຕາເວັນອອກສຽງໃຕ້ (ຕົວຢ່າງ: ກໍາປູເຈຍ, ສປປ ລາວ, ມຽນມາ, ຕີມໍເລັສເຕ, ອິນໂດເນເຊຍ, ຟີລິບປິນ, ໄທ ແລະ ຫວຽດນາມ) ລວມທັງປະເທດທີ່ດ້ອຍໂອກາດທາງດ້ານເສດຖະກິດ. ບັນດາປະເທດ ແລະ ຂົງເຂດອາຊີໃຕ້ (ຕົວຢ່າງ: ອັຟການິສຖານ, ບັງກະລາເທດ, ພູຖານ, ປາກິດສະຖານ, ເນປານ, ສີລັງກາ ແລະ ອິນເດຍ). ເມື່ອປະເມີນຂໍ້ສະເໜີຂອງອິນໂດເນເຊຍ, ຟີລິບປິນ, ໄທ, ຫວຽດນາມ ແລະ ອິນເດຍ, ຈາກການທົບທວນຂອງຄະນະກໍາມະການຈະຈັດບຸລິມະສິດໃຫ້ຜູ້ສະໝັກທີ່ມາຈາກພາກພື້ນ ແລະ/ຫຼື ສະຖາບັນທີ່ມີຂໍ້ຈໍາກັດທາງດ້ານຊັບພະຍາກອນ ແລະ ພື້ນຖານໂຄງລ່າງ. ນອກຈາກນີ້, ພວກເຮົາຍັງຈະຊຸກຍູ້ໂຄງການຮ່ວມມື, ໂດຍສະເພາະແມ່ນບັນດານັກວິຊາການຄູ່ຮ່ວມງານຈາກສະຖາບັນທີ່ບໍ່ມີຊັບພະຍາກອນກັບເພື່ອນຮ່ວມງານໃນສະຖາບັນທີ່ສະເໜີຊັບພະຍາກອນ ແລະ ໂຄງສ້າງພື້ນຖານເພີ່ມເຕີມ ເພື່ອສະໜັບສະໜູນວຽກງານຂອງພວກເຂົາ.

ຜູ້ໄດ້ຮັບທຶນການຊ່ວຍເຫຼືອຂອງ CHSS ຈະຖືກເຊື້ອເຊີນໃຫ້ຍື່ນສະເໜີຮ່າງໂຄງການໃນກອງປະຊຸມ AAS-in-Asia, ບ່ອນທີ່ເຂົາເຈົ້າຈະມີໂອກາດທີ່ຈະແບ່ງປັນຜົນໄດ້ຮັບຂອງໂຄງການ

ຄົ້ນຄວ້າຂອງເຂົາເຈົ້າ, ເຂົ້າຮ່ວມໃນກອງປະຊຸມສ້າງທັກສະ ແລະ ປຶກສາຫາລືກ່ຽວກັບໂອກາດໃນການເຜີຍແຜ່ກັບຄູ່ຮ່ວມງານຂອງພວກເຮົາຢູ່ໃນອາຊີ, ເອີຣົບ ແລະ ສະຫະລັດອາເມລິກາ.

## ມີໃຜແດ່ທີ່ຈະໄດ້ສິດ?

- ຄົນສັນຊາດອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້ທີ່ສຳເລັດການສຶກສາປະລິນຍາເອກ, ປະລິນຍາໂທ ຫຼື ທຽບເທົ່າ, ຜູ້ທີ່ເປັນ ຫຼື ຈະປະກອບອາຊີບທາງວິຊາການໃນອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້.
- ນັກວິຊາການ, ນັກສຶກສາ, ນັກຄົ້ນຄວ້າເອກະລາດ ແລະ ບັນຍາຊົນທົ່ວໄປ ເຊິ່ງເປັນຜູ້ທີ່ອາໄສຢູ່ໃນປະເທດທີ່ມີລາຍຮັບປານກາງຕ່ຳ ເຊັ່ນດຽວກັບຜູ້ທີ່ມາຈາກ ແລະ ອາໄສຢູ່ໃນຂອບເຂດພື້ນທີ່ຫຼັງຈາກມີການຂັດແຍ້ງ ຫຼື ເຂດພື້ນທີ່ທີ່ຍັງມີຄວາມຂັດແຍ້ງຢູ່.
- ບໍ່ຈຳເປັນຕ້ອງເປັນສະມາຊິກ AAS.

## ພາບລວມໂຄງການ

ໂຄງການໃຫ້ທຶນຂອງ CHSS ຈະຊຸກຍູ້ໃຫ້ໂຄງການທັງແບບບຸກຄົນ ແລະ ແບບກຸ່ມ (ເຊັ່ນ: ການນຳເອົານັກວິຊາການອາວຸໂສ ແລະ ຮຸ່ນນ້ອງມາຮ່ວມກັນ) ເຊິ່ງຈະສຳຫຼວດຫົວຂໍ້ຄົ້ນຄວ້າ i) ການພັດທະນາ, ii) ປະຊາທິປະໄຕ, iii) ສິດທິມະນຸດ, iv) ເພດ ແລະ ບົດບາດຍິງຊາຍ, v) ສະພາບແວດລ້ອມ, ແລະ v) ການອະນຸລັກປ່າໄມ້ (ໂດຍສະເພາະ ປະເທດຟີລິບປິນ ທ່ານັ້ນ). ຫົວຂໍ້ເຫຼົ່ານີ້ອາດຈະຖືກຄົ້ນຄວ້າດ້ວຍຕົນເອງ ຫຼື ຮ່ວມກັນເປັນທີມ ຫຼື ໃນລັກສະນະຄົ້ນຄວ້າຜ່ານມະນຸດວິທະຍາ ແລະ ວິທະຍາສາດສັງຄົມ. ບຸລິມະສິດຈະຖືກມອບໃຫ້ຜູ້ສະໝັກທີ່ບໍ່ເຄີຍໄດ້ຮັບທຶນຄົ້ນຄວ້າມາກ່ອນ ແລະ/ຫຼື ຜູ້ທີ່ຢູ່ໃນສະຖາບັນທີ່ມີຊັບພະຍາກອນມະນຸດບໍ່ພຽງພໍ.

ໂຄງການຍັງຍິນດີຕ້ອນຮັບຂໍ້ສະເໜີຂໍ້ລິເລີ່ມພິເສດເພື່ອແນໃສ່ບັນທຶກ, ຮັກສາ ແລະ ເຜີຍແຜ່ພາສາທີ່ໃກ້ຈະສູນພັນ, ປະຫວັດສາດບອກເລົ່າດ້ວຍປາກເປົ່າ ແລະ ພູມປັນຍາທ້ອງຖິ່ນ.

ທຶນຊ່ວຍເຫຼືອ CHSS ໂດຍທົ່ວໄປສຳລັບໂຄງການໄລຍະສັ້ນ ແມ່ນ $2,000; ສຳລັບໄລຍະຍາວ ແມ່ນ $12,000.

ການໃຫ້ທຶນຈະໃຫ້ເຂົ້າໃຈວ່າ ພາຍໃນສອງປີ ຫຼັງຈາກສຳເລັດໂຄງການຂອງພວກເຂົາ, ຜູ້ຮັບທຶນຈະນຳສະ ເໜີຜົນການຄົ້ນຄວ້າຂອງພວກເຂົາໃນກອງປະຊຸມ AAS-in-Asia ຫຼື ກອງປະຊຸມສາກົນທີ່ຄ້າຍຄືກັນ, ພ້ອມທັງຮັບຮູ້ລາງວັນ, ສິ່ງພິມເຜີຍແຜ່ຕ່າງໆ ໂດຍອີງໃສ່ການ

ຄົ້ນຄວ້າທີ່ໄດ້ຮັບທຶນຄວນຮັບຮູ້ເຖິງການປູກຈິດສຳນຶກດ້ານຜູ້ໃຫ້ທຶນການຄົ້ນຄວ້າມະນຸດວິທະຍາ ແລະ ວິທະຍາສາດສັງຄົມ ເກີດຂຶ້ນໄດ້ດ້ວຍການສະໜັບສະໜູນທຶນອັນໃຫຍ່ຫຼວງຂອງສວີເດນ.

## ຈະໃຊ້ເງິນທຶນອັນໃດໄດ້ແດ່

- ການຄົ້ນຄວ້າທີ່ສຳຄັນສຳລັບນັກວິຊາການຫຼັງປະລິນຍາເອກ, ປະລິນຍາເອກ ແລະ ນັກສຶກສາປະລິນຍາໂທທີ່ກຳລັງຂຽນວິທະຍານິພົນ ເພື່ອປ້ອງກັນວິທະຍານິພົນ ແລະ / ຫຼືໂຄງການຂຽນປຶ້ມ ຫຼື ສຳລັບການດັດແກ້ປຶ້ມທີ່ເປັນຕົ້ນສະບັບ ແລະ ບົດຄວາມທາງວາລະສານດ້ານມະນຸດວິທະຍາ ແລະ ວິທະຍາສາດສັງຄົມ.
- ກອງປະຊຸມສຳມະນາວິຊາການຂະໜາດນ້ອຍ ແລະ ວິທີການທີ່ເປັນທິດສະດີໃນການສິດສອນ.
- ໂຄງການແປພາສາ, ການພັດທະນາຫຼັກສູດ, ແລະໂຄງການປຶ້ມແບບຮຽນ.
- ຮູບເງົາສາລະຄະດີ ແລະ ໂຄງການສິລະປະການວາດພາບ.

## ເງິນທຶນອັນໃດແດ່ທີ່ອາດບໍ່ໃຊ້ສຳລັບ

- ຄ່າເດີນທາງ ແລະ ຄ່າທີ່ພັກເພື່ອເຂົ້າຮ່ວມກອງປະຊຸມລະດັບອາຊີບ.
- ເງິນທຶນດັ່ງກ່າວບໍ່ສາມາດໃຊ້ຮ່ວມກັບທຶນການຄົ້ນຄວ້າອື່ນໄດ້.
- ຄ່າໃຊ້ຈ່າຍໃນການເດີນທາງສຳລັບທຸລະກິດ ຫຼື ຄັ້ງທຳອິດເພື່ອດຳເນີນການຄົ້ນຄວ້າ.
- ທຶນການຄົ້ນຄວ້າ CHSS ບໍ່ສາມາດໃຊ້ເພື່ອຈ່າຍຄືນເງິນກູ້ຂອງນັກຮຽນ ຫຼື ເພື່ອຄອບຄຸມຄ່າຮຽນ.

## ວິທີການສະໝັກ

ໃບສະໝັກທັງໝົດຕ້ອງຖືກສົ່ງຜ່ານປະຕູແອັບພລິເຄຊັນ AAS ພາຍໃນ 1 ກັນຍາ 2023. ແອັບພລິເຄຊັນ ຫຼື ຄຳຮ້ອງສະໝັກຂອງທ່ານຕ້ອງປະກອບມີ:

- ໜ້າບົກຈົດໝາຍ ທີ່ລະບຸໄວ້ວ່າ: 1) ວິທີການໃຊ້ທຶນການຄົ້ນຄວ້າ; 2) ຈະມີວິທີການປະກອບສ່ວນເຂົ້າໃນການພັດທະນາວິຊາຊີບ ແລະ ການເຮັດວຽກທາງວິຊາການຂອງຜູ້ສະໝັກແບບໃດ; 3) ວິທີການນີ້ຈະປະກອບສ່ວນເຂົ້າໃນການສຶກສາຂອງອາຊີໃຕ້ ຫຼື ອາຊີຕາເວັນອອກສຽງໃຕ້ໂດຍທົ່ວໄປ.

- ຊີວະປະຫວັດຫຍໍ້ໂດຍລະອຽດ, ເຊັ່ນດຽວກັນກັບປະຫວັດຫຍໍ້ຂອງສະມາຊິກທີມງານ ຫຼື ຜູ້ເຂົ້າຮ່ວມການຄົ້ນຄວ້າຫຼັກ (ຖ້າມີ).
- ບົດສະເໜີຕ້ອງມີ 800-1,000 ຄໍາສັບ ກ່ຽວກັບໂຄງການຄົ້ນຄວ້າ.
- ງົບປະມານ, ລາຍລະອຽດຄ່າໃຊ້ຈ່າຍຂອງໂຄງການທີ່ໄດ້ຄາດໄວ້.
- ຕົວຢ່າງຜົນງານຂອງຜູ້ສະໝັກ. (ມີຄວາມຍາວສັ້ນສຸດ ແຕ່ຄວນມີ 2,000 - 2,500 ຄໍາສັບ).
- ຈົດໝາຍແນະນໍາສອງສະບັບໂດຍຜູ້ຕີລາຄາ, ຜູ້ທີ່ຄຸ້ນເຄີຍກັບຂະແໜງການຄົ້ນຄວ້າຂອງຜູ້ສະໝັກ. ບຸລິມະສິດຈະຖືກມອບໃຫ້ຜູ້ສະໝັກທີ່ບໍ່ເຄີຍໄດ້ຮັບທຶນຄົ້ນຄວ້າມາກ່ອນ ແລະ/ຫຼື ຢູ່ໃນສະຖາບັນທີ່ຂາດຊັບພະຍາກອນມະນຸດ. ຜູ້ສະໝັກແຕ່ລະຄົນກະລຸນາໃຫ້ສົ່ງຈົດຫມາຍຜ່ານທາງອອນລາຍພາຍໃນວັນທີ 1 ເດືອນກັນຍາ 2023. ຖ້າຫາກມີຄວາມຫຍຸ້ງຍາກໃດໆເກີດຂຶ້ນໃນຂັ້ນຕອນນີ້, ກະລຸນາຕິດຕໍ່ຜູ້ຈັດການການຊ່ວຍທຶນໄດ້ທີ່ grants@asianstudies.org.
- ຜູ້ສະໝັກຈະໄດ້ຮັບການຕີລາຄາດ້ານງົບປະມານ ໃນເດືອນທັນວາ 2023.

## ຄໍາຖາມທີ່ຖາມເລື້ອຍໆ – FAQ –

### *ຂ້າພະເຈົ້າຄວນຂໍທຶນຈໍານວນເທົ່າໃດ?*

ມັນຂຶ້ນກັບຄວາມຍາວຂອງໂຄງການຂອງທ່ານ, ໂດຍທົ່ວໄປ, ປະມານ $1,000 ຕໍ່ເດືອນ. ຕົວຢ່າງ, ໂຄງການ 1 - 2 ເດືອນຄວນຮ້ອງຂໍ $1,000 - $2,000 USD, ໂຄງການ 3 - 6 ເດືອນ $3,000 - $6,000, ແລະ ອື່ນໆ. ເງິນທຶນ CHSS ໂດຍທົ່ວໄປແລ້ວແມ່ນຕັ້ງແຕ່ $2,000 - $12,000.

### *ຂ້ອຍຈໍາເປັນຕ້ອງເປັນສະມາຊິກ AAS ເພື່ອສະໝັກຂໍທຶນບໍ່?*

ບໍ່, ທ່ານບໍ່ຈໍາເປັນຕ້ອງເປັນສະມາຊິກ AAS ເພື່ອສະໝັກ. ຢ່າງໃດກໍຕາມ, ສະມາຊິກ AAS ຍັງສາມາດຮັບສະໝັກເຊັ່ນກັນ.

### *ເງິນທຶນຄວນໃຊ້ເພື່ອຫຍັງ?*

- ວຽກງານພາກສະໜາມ ແລະ ການຄົ້ນຄວ້າຫໍສະໝຸດ-ບ່ອນເກັບມ້ຽນເອກະສານທີ່ສໍາຄັນສໍາລັບນັກວິຊາການຫຼັງປະລິນຍາເອກ ແລະ ປະລິນຍາເອກ ແລະ ວິທະຍານິພົນ, ການນໍາ

ສະເໜີບົດຂອງນັກສຶກສາປະລິນຍາໂທ, ແລະ / ຫຼືໂຄງການໜັງສືສໍາລັບການດັດແກ້ໜັງສືຕົ້ນສະບັບ ແລະ ບົດຄວາມໃນວາລະສານດ້ານມະນຸດວິທະຍາ ແລະ ວິທະຍາສາດສັງຄົມ.

- ກອງປະຊຸມສໍາມະນາວິຊາການຂະໜາດນ້ອຍ, ການສ້າງທັກສະ ແລະ ການເຝິກອົບຮົມ.
- ໂຄງການແປພາສາ, ພັດທະນາຫຼັກສູດ ແລະ ປຶ້ມແບບຮຽນ.
- ສາລະຄະດີ ຮູບເງົາ ແລະໂຄງການສິລະປະອາດພາບສິນ.

*ເງິນທຶນອາດບໍ່ໄດ້ນໍາໃຊ້ຈະມີຫຍັງແດ່?*

- ຄ່າໃຊ້ຈ່າຍໃນການເດີນທາງ, ໂຮງແຮມ ແລະ ອາຫານເພື່ອເຂົ້າຮ່ວມກອງປະຊຸມແບບມືອາຊີບ.
- ເງິນທຶນບໍ່ສາມາດໃຊ້ໄດ້ໃນຂະນະທີ່ຜູ້ຮັບທຶນ ເປັນຜູ້ຮັບທຶນການຄົ້ນຄວ້າອື່ນພ້ອມກັນ.
- ທຸລະກິດ ຫຼື ການເດີນທາງດ້ວຍເຮືອບິນ-ລົດໄຟຊັ້ນໜຶ່ງ ເພື່ອເດີນທາງໄປເຮັດການຄົ້ນຄວ້າ.
- ທຶນຊ່ວຍເຫຼືອການຄົ້ນຄວ້າ CHSS ບໍ່ສາມາດໃຊ້ຈ່າຍເພື່ອສໍາລະເງິນກູ້ຂອງມະຫາວິທະຍາໄລຂອງນັກສຶກສາ ຫຼື ເພື່ອຈ່າຍຄ່າຮຽນ.

*ການຕັດສິນໃຈຈະໄດ້ຮັບການພິຈະລະນາໃນເວລາໃດ? ແລະ ເມື່ອໃດທີ່ຂ້າພະເຈົ້າຈະໄດ້ຮັບການແຈ້ງຕອບຖ້າຂ້າພະເຈົ້າໄດ້ຮັບທຶນ?*

ການຕີລາຄາຂອງທຶນຈະເກີດຂຶ້ນພາຍໃນວັນທີ 30 ເດືອນພະຈິກ 2023. ຜູ້ສະໝັກຈະໄດ້ຮັບການແຈ້ງໃຫ້ຊາບພາຍໃນສອງສາມອາທິດຫຼັງຈາກວັນທີນີ້ຖ້າພວກເຂົາຕ້ອງການທຶນ.

*ເງິນທຶນຖືກແຈກຢາຍແບບໃດ?*

ສໍາລັບທຶນການຄົ້ນຄວ້າແຕ່ລະທຶນ, AAS ຈະຫັກເອົາ 20% ຂອງທຶນທັງໝົດເຊິ່ງຈະສົ່ງໃຫ້ເມື່ອວຽກງານການຄົ້ນຄວ້າໄດ້ສໍາເລັດ ພ້ອມທັງມີບົດລາຍງານທາງດ້ານການເງິນ.

ຂ້າພະເຈົ້າເປັນຄົນສັນຊາດອາຊີໃຕ້/ຕາເວັນອອກສຽງໃຕ້, ແຕ່ປັດຈຸບັນຂ້າພະເຈົ້າອາໄສຢູ່ນອກເຂດອາຊີໃຕ້/ຕາເວັນອອກສຽງໃຕ້. ຂ້າພະເຈົ້າມີສິດສະໝັກບໍ່?

ແມ່ນແລ້ວ, ທ່ານມີສິດສະໝັກໄດ້. ຖ້າປັດຈຸບັນທ່ານອາໄສຢູ່ໃນສະຖາບັນທີ່ມີຊັບພະຍາກອນທີ່ດີ, ຈົ່ງຮັບຊາບວ່າ ໂຄງການຮ່ວມມືໄດ້ຮັບການຊຸກຍູ້, ໂດຍສະເພາະແມ່ນໂຄງການທີ່ເປັນເພື່ອນຮ່ວມງານກັບນັກວິຊາການຈາກສະຖາບັນທີ່ບໍ່ມີຊັບພະຍາກອນພຽງພໍກັບເພື່ອນຮ່ວມງານໃນສະຖາບັນທີ່ມີຊັບພະຍາກອນ ແລະ ໂຄງສ້າງພື້ນຖານຫຼາຍຂຶ້ນ ເພື່ອສະ

ໜັບສະໜູນວຽກງານຂອງພວກເຂົາ. ໂຄງການຮ່ວມມືຄວນມີຢ່າງໜ້ອຍໜຶ່ງຄົນຢູ່ໃນເຂດເປົ້າໝາຍ(ກໍາປູເຈຍ, ສປປ ລາວ, ມຽນມາ, ຕີມໍເລັສເຕ, ອິນໂດເນເຊຍ, ຟີລິບປິນ, ໄທ, ຫວຽດນາມ, ອັບການິສະຖານ, ບັງກະລາເທດ, ພູຖານ, ປາກິດສະຖານ, ເນປານ, ສີລັງກາ ແລະ ອິນເດຍ).

*ປະເທດໃດແດ່ທີ່ມີສິດຮັບທຶນ?*

ສະມາຄົມອາຊີສຶກສາຍິນດີຮັບເອົາໃບສະໝັກຈາກບັນດາປະເທດທີ່ມີລາຍໄດ້ປານກາງ ແລະ ຕໍ່າ ຂອງອາຊີຕາເວັນອອກສຽງໃຕ້ (ເຊັ່ນ: ກໍາປູເຈຍ, ສປປ ລາວ, ມຽນມາ, ຕີມໍເລັສເຕ, ອິນໂດເນເຊຍ, ຟີລິບປິນ, ໄທ, ແລະ ຫວຽດນາມ) ນັບທັງຜູ້ດ້ອຍໂອກາດທາງດ້ານເສດຖະກິດຢູ່ບັນດາປະເທດ ແລະ ເຂດອາຊີໃຕ້ (ເຊັ່ນ: ອັບການິສະຖານ, ບັງກະລາເທດ, ພູຖານ, ປາກິດສະຖານ, ເນປານ, ສີລັງກາ ແລະ ອິນເດຍ). ເມື່ອຕີລາຄາຂໍ້ສະເໜີຂອງອິນໂດເນເຊຍ, ຟີລິບປິນ, ໄທ, ຫວຽດນາມ ແລະ ອິນເດຍ, ຄະນະກໍາມະການຈະພິຈະລະນາຈັດລໍາດັບໃຫ້ຄວາມສໍາຄັນຜູ້ສະໝັກທີ່ມາຈາກພາກພື້ນ ແລະ/ຫຼື ສະຖາບັນທີ່ມີຂໍ້ຈໍາກັດດ້ານຊັບພະຍາກອນ ແລະ ພື້ນຖານໂຄງລ່າງ. ຄໍາຮ້ອງສະໝັກຈາກ Maldives ຍັງຈະໄດ້ຮັບການພິຈາລະນາ.

*ຄໍານິຍາມຂອງ "ສະຖາບັນທີ່ບໍ່ມີຊັບພະຍາກອນພຽງພໍ" ຄືຫຍັງ?*

ພວກເຮົາໄດ້ກໍານົດ "ສະຖາບັນທີ່ບໍ່ມີຊັບພະຍາກອນ" ມີມະຫາວິທະຍາໄລ ແລະ ຄັງຄວາມຄິດທີ່ຂາດທຶນຮອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດ ເພື່ອພັດທະນາຄວາມສາມາດໃນການຄົ້ນຄວ້າທາງດ້ານມະນຸດວິທະຍາ ແລະ ວິທະຍາສາດສັງຄົມຢ່າງເຕັມສັກກະຍາພາບ; ຕາມທໍານຽມແລ້ວ ສະຖາບັນເຫຼົ່ານີ້ມີໂອກາດມອບທຶນແບບຈໍາກັດສໍາລັບຄະນະວິຊາ, ເພື່ອນຮ່ວມງານ, ນັກສຶກສາຂອງເຂົາເຈົ້າ ແລະ ສາມາດຕັ້ງພູມສັນຖານຢູ່ໃນທາງພູມິສາດທີ່ຮອບນອກໂຕເມືອງທີ່ສໍາຄັນ.

*ຂ້າພະເຈົ້າມີສິດ ຫຼືບໍ່ ຫາກຂ້າພະເຈົ້າຖືເງິນ ໃຫ້ກູ້ຢືມເພື່ອການສຶກສາ?*

ບຸກຄົນໃດກໍຕາມທີ່ກໍາລັງຖືເງິນກູ້ນັກຮຽນເພື່ອຈ່າຍຄ່າຮຽນຈະບໍ່ມີສິດໄດ້ຮັບເງິນທຶນສໍາລັບທຶນການຄົ້ນຄວ້າ CHSS.

*ຂ້າພະເຈົ້າສາມາດຍື່ນຄໍາຮ້ອງຫຼາຍກວ່າໜຶ່ງສະບັບໄປຍັງ CHSS ໂປຼແກຼມໄດ້ບໍ?*

ໄດ້, ແຕ່ມີພຽງໂຄງການຄົ້ນຄວ້າໜຶ່ງຕໍ່ຜູ້ສະໝັກໜຶ່ງຄົນເທົ່ານັ້ນທີ່ຈະໄດ້ຮັບທຶນ.

*ຕ້ອງການຈົດໝາຍຈາກຜູ້ຕີລາຄາຈັກສະບັບໃນໂຄງການທີມ ຫຼື ໂຄງການຮ່ວມ?*

ຕ້ອງໃຊ້ຈົດໝາຍຈາກຜູ້ພິຈະລະນາພຽງ 1 ສະບັບຕໍ່ໃບສະໝັກ ເຊັ່ນດຽວກັບໂຄງການແຕ່ລະໂຄງການ, ໃນກໍລະນີຂອງໂຄງການຮ່ວມ ຫຼື ໂຄງການແບບເປັນທີມງານ, ຜູ້ພິຈະລະນາສາມາດເວົ້າກັບສາຂາວິຊາທີ່ຈະຈັດໂຄງການຄົ້ນຄວ້າໄດ້ໃນໂຄງການ co-pi ຂໍແນະນໍາໃຫ້ໃຊ້ຈົດໝາຍຮັບຮອງ 1 ສະບັບຕໍ່ co-pi.

*ຈໍາເປັນຕ້ອງມີຕົວຢ່າງການຂຽນໃນໂຄງການ co-pi ຫຼື ທີມງານຈໍານວນເທົ່າໃດ?*

ກະລຸນາຈໍາກັດຄວາມຈໍານວນຄໍາສັບທັງໝົດໄວ້ທີ່ 2,500 ຄໍາສັບ ໃນຕົວຢ່າງການຂຽນໂຄງການຮ່ວມ ຫຼືທີມງານ. ໃນກໍລະນີຂອງໂຄງການ co-pi ປະມານ 1,250 ຄໍາສັບ ຕໍ່ບຸກຄົນ ທີ່ມີຄວາມເໝາະສົມ. ການຂຽນຕົວຢ່າງສໍາລັບໂຄງການຂອງທີມງານ ຄວນມີຕົວຢ່າງຈາກຫົວໜ້າທີມ, ແຕ່ອາດຈະລວມເຖິງສະມາຊິກໃນທີມງານທັງໝົດທີ່ຂຽນຕົວຢ່າງ ຫຼື ຂຽນຮ່ວມກັນ ຫຼື ເອກະສານທີ່ດັດແກ້.

*ຂ້າພະເຈົ້າຕ້ອງເຮັດວຽກໃນໂຄງການໃຫ້ທຶນດົນປານໃດ?*

ການໃຫ້ທຶນຄວນເຂົ້າໃຈວ່າພາຍໃນສອງປີ ຫຼັງຈາກສໍາເລັດໂຄງການ ຜູ້ຮັບທຶນຈະໄດ້ນໍາສະເໜີຜົນຂອງການຄົ້ນຄວ້າຂອງຕົນຢູ່ໃນກອງປະຊຸມ AAS-in-Asia ຫຼື ກອງປະຊຸມສາກົນໃດໜຶ່ງທີ່ຄ້າຍຄືກັນ, ດ້ວຍການຮັບຮູ້ດ້ວຍລາງວັນ ເປັນການພິມເຜີຍແຜ່ ໂດຍອີງໃສ່ການຄົ້ນຄວ້າທີ່ໄດ້ຮັບທຶນກໍ່ຈະຮັບຮູ້ຈາກ ການປູກຈິດສໍານຶກການຄົ້ນຄວ້າດ້ານມະນຸດວິທະຍາ ແລະ ວິທະຍາສາດສັງຄົມ ເກີດຂຶ້ນໄດ້ດ້ວຍການສະໜັບສະໜູນທຶນອັນໃຫຍ່ຫຼວງຂອງສວີເດນ (AAS-Sweden Cultivating the Humanities and Social Sciences Research Grants).